ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ກົມກົງສຸນ

**ຄໍາຮ້ອງຂໍໜັງສືຜ່ານແດນຫົວໃໝ່ ☐ ຄໍາຮ້ອງຂໍປ່ຽນໜັງສືຜ່ານແດນ ☐**

| |
|---|
| ຕິດຮູບຖ່າຍສີ<br>ຂະໜາດ 4x6 ຊມ<br>ພື້ນສີຂາວ ແລະ<br>ປະທັບການາຍບ້ານ |

ຊື່ ທ້າວ/ນາງ : . . . . . . . . . . . . . . . . . ນາມສະກຸນ : . . . . . . . . . . . . . . . . .

Prenom/Name:. . . . . . . . . . . . . . Nom/Surname: . . . . . . . . . . . . . . .

ຊື່ເດີມ: . . . . . . . . . . . . . . . . . . . . ນາມສະກຸນເດີມ: . . . . . . . . . . . . . . . . .

ວັນ ເດືອນ ປີ ເກີດ _ _ / _ _ / _ _ _ _ ບ້ານເກີດ: . . . . . . . . . . . . . . . . . .

ເມືອງ: . . . . . . . . . . . . . . . ແຂວງ: . . . . . . . . . . . . . .ປະເທດ: . . . . . . . . . .

ເຊື້ອຊາດ: . . . . . . . . ສັນຊາດ . . . . . . . . ສາສະໜາ: . . . . . . . . . ລວງສູງ: . . . . .

ທີ່ຢູ່ປະຈຸບັນ ບ້ານ: . . . . . . . . . . . . . ໜ່ວຍ: . . . . . . . . . ເຮືອນເລກທີ: . . . . . . .

ເມືອງ: . . . . . . . . . . . . . ແຂວງ: . . . . . . . . . . . . . . . . ໂທລະສັບ: . . . . . . . . . .

ອາຊີບ: . . . . . . . . . . . . . . . . .ບ່ອນເຮັດວຽກ: . . . . . . . . . . . . . . . . . . . . .

ສໍາມະໂນຄົວເລກທີ: . . . . . . . . . ລົງວັນທີ ___ ___ /___ ___ /___ ___ ___ ___ ອອກຊື່: . . . . . . . . . . . . . . . . . .

ຊື່ພໍ່: . . . . . . . . . . . . . . . .ນາມສະກຸນ: . . . . . . . . . . . . . . . ອາຍຸ: . . . . . . . ໂທລະສັບ: . . . . . . . . . .

ຊື່ແມ່: . . . . . . . . . . . . . . . ນາມສະກຸນ: . . . . . . . . . . . . . . . ອາຍຸ: . . . . . . . ໂທລະສັບ: . . . . . . . . . .

ບ້ານຢູ່ປະຈຸບັນຂອງພໍ່/ແມ່: . . . . . . . . . . ເມືອງ: . . . . . . . . . . ແຂວງ: . . . . . . . . . ປະເທດ: . . . . . . . .

ສະຖານະພາບຄອບຄົວ: ☐ ໂສດ, ☐ ແຕ່ງງານແລ້ວ, ຊື່ ຜົວ/ເມຍ: . . . . . . . . . . . . . .ນາມສະກຸນ: . . . . . . . . . .

**ກໍລະນີສຸກເສີນ ຕິດຕໍ່ຫາ:** ຊື່ ແລະ ນາມສະກຸນ: . . . . . . . . . . . . . . . . . . ບັດປະຈໍາຕົວເລກທີ: . . . . . . . . . .

ສາຍພົວພັນ: . . . . . . . . . . . . . . ໂທລະສັບ: . . . . . . . . . . . . . . .ຢູ່ບ້ານ: . . . . . . . . . . . . . . . . .

ເມືອງ: . . . . . . . . . . . . . . . . . . . . . . . ແຂວງ: . . . . . . . . . . . . . . . . . . . . . . . . . . . .

**ເລກທີໜັງສືຜ່ານແດນເຫລັ້ມເກົ່າ (ຖ້າມີ):** . . . . . . . ລົງວັນທີ ___ _ /_ ___ /_ ___ ___ _ ໝົດອາຍຸວັນທີ _ ___ /_ _ _ /_ _ _ _

ຂ້າພະເຈົ້າ ຂໍປະຕິຍານວ່າ ທຸກຂໍ້ຄວາມທີ່ຂຽນມາຂ້າງເທິງນີ້ ລ້ວນແຕ່ເປັນຂໍ້ມູນຄວາມຈິງທຸກປະການ ແລະ ຖ້າຫາກມີການບິດເບືອນ ຈະຮັບຜິດຊອບຕາມກົດໝາຍແຫ່ງ ສປປ ລາວ.

ເອກະສານເລກທີ: . . . . . . / ວັນທີ: . . . . . . . . . .

ຂ້າພະເຈົ້າຂໍຢັ້ງຢືນວ່າຜູ້ກ່ຽວແມ່ນຄົນສັນຊາດລາວ ແລະ ຢູ່ໃນການຄຸ້ມຄອງຂອງບ້ານເຮົາແທ້

**ລາຍເຊັນ ແລະ ປະທັບກາຂອງນາຍບ້ານ**

| |
|---|
| ກະລຸນາສໍາເນົາບັດປະຈໍາຕົວ ຕິດໃສ່ນີ້ດ້ວຍ |

**ລາຍເຊັນຜູ້ຮ້ອງຂໍ**

**ໝາຍເຫດ:** ກະລຸນາອ່ານຄໍາແນະນໍາ ແລະ ລາຍລະອຽດເອກະສານຕ່າງໆຄັດຕິດມາພ້ອມນີ້ ຢູ່ໜ້າຕໍ່ໄປ

(ໃບຄໍາຮ້ອງສະບັບນີ້ບໍ່ໄດ້ ຊື້-ຂາຍ)

# ເອກະສານຄັດຕິດການຂໍໜັງສືຜ່ານແດນ

- **<u>ຂໍເຮັດໜັງສືຜ່ານແດນຫົວໃໝ່</u>**
  1. ສຳເນົາປຶ້ມສຳມະໂນຄົວ ຈຳນວນ 01 ຊຸດ
  2. ສຳລັບຜູ້ທີ່ມີອາຍຸຕ່ຳກວ່າ 18 ປີ ຕ້ອງມີໃບອະນຸຍາດຜູ້ປົກຄອງ ໂດຍເຊັນຜ່ານອຳນາດການປົກຄອງບ້ານ ຈຳນວນ 01 ໃບ

- **<u>ຂໍປ່ຽນໜັງສືຜ່ານແດນ</u>**
  1. ໜັງສືຜ່ານແດນເຫລັ້ມເກົ່າ

## ຄຳແນະນຳ

1. ຂຽນຄຳຮ້ອງຂໍໜັງສືຜ່ານແດນຕາມຟອມ ເຊິ່ງສາມາດດາວໂລດໄດ້ຈາກເວັບໄຊຂອງກະຊວງການຕ່າງປະເທດ ຕາມທີ່ຢູ່ນີ້ http://www.mofa.gov.la/index.php/lo/ ຫຼື http://www.mofa.gov.la/index.php/lo/passport_application
2. ໃບຄຳຮ້ອງຂໍໜັງສືຜ່ານແດນ ຕ້ອງຕິດຮູບສີ (ພື້ນສີຂາວ) ຂະໜາດ 4 x 6 ຊມ ພ້ອມທັງປະທັບການາຍບ້ານ;
3. ບຸກຄົນທີ່ມາເຮັດໜັງສືຜ່ານແດນ ຕ້ອງໄດ້ມາຍື່ນເອກະສານດ້ວຍຕົນເອງ ເພື່ອຖ່າຍຮູບ ແລະ ເກັບລາຍນິ້ວມື;
4. ບຸກຄົນທີ່ມາເຮັດໜັງສືຜ່ານແດນ ຕ້ອງຖືບັດປະຈຳຕົວ ແລະ ປຶ້ມສຳມະໂນຄົວສະບັບແທ້ ມາພ້ອມ (ໃນປຶ້ມດັ່ງກ່າວຕ້ອງມີຮູບຜູ້ກ່ຽວ ພ້ອມກາປະທັບຂອງ ປກສ ເມືອງ);
5. ບຸກຄົນທີ່ມາເຮັດໜັງສືຜ່ານແດນ ກໍລະນີ ພໍ່ ແລະ ແມ່ ບໍ່ໄດ້ຢູ່ໃນສຳມະໂນຄົວເຫຼັ້ມດຽວກັນ ແຕ່ຕ້ອງການໃສ່ນາມສະກຸນນຳພໍ່ ຕ້ອງສຳເນົາໃບໜັງສືຢັ້ງຢືນການເກີດ, ສຳເນົາໃບແຕ່ງດອງຂອງພໍ່ ແລະ ແມ່ ຄັດຕິດມາພ້ອມ;
6. ສຳລັບຜູ້ທີ່ມີອາຍຸຕ່ຳກວ່າ 18 ປີ ຕ້ອງແມ່ນຜູ້ປົກຄອງພາມາ (ໃນກໍລະນີຂໍເຫລັ້ມໃຫມ່);
7. ບຸກຄົນທີ່ເຮັດໜັງສືຜ່ານແດນເສຍ ຕ້ອງມີໃບແຈ້ງເສຍຫາຍຈາກເຈົ້າໜ້າທີ່ ປກສ ຂັ້ນເມືອງ ຫຼື ແຂວງ ຫຼື ນະຄອນຫຼວງ;
8. ບຸກຄົນທີ່ມີໜັງສືຜ່ານແດນແລ້ວ ຖ້າຕ້ອງການປ່ຽນຊື່ ຫຼື ນາມສະກຸນ ຫຼື ຕື່ມນາມສະກຸນ ຕ້ອງມີໃບອະນຸຍາດ ຈາກພະແນກພາຍໃນເມືອງ ຫຼື ໃບຢັ້ງຢືນຈາກສານ;
9. ບຸກຄົນທີ່ມີພໍ່ ຫຼື ແມ່ ເປັນຄົນຕ່າງປະເທດ ຕ້ອງຖືໃບແຕ່ງດອງສະບັບແທ້ຂອງພໍ່ແມ່ມານຳ ພ້ອມທັງສາເນົາປະກອບໃສ່ໃບຄຳຮ້ອງຂໍໜັງສືຜ່ານແດນ. ຖ້າແຕ່ງດອງຢູ່ຕ່າງປະເທດ ໃບແຕ່ງດອງດັ່ງກ່າວ ຕ້ອງຜ່ານການຢັ້ງຢືນຈາກສະຖານເອກອັກຄະລັດຖະທູດ ຫຼື ກົງສຸນໃຫຍ່ ແຫ່ງ ສປປ ລາວ ປະຈຳຢູ່ ຫຼື ຮັບຜິດຊອບປະເທດນັ້ນ;
10. ບຸກຄົນທີ່ມາຂໍປ່ຽນໜັງສືຜ່ານແດນ ຖ້າປ່ຽນທີ່ຢູ່ຕ້ອງສຳເນົາປຶ້ມສຳມະໂນຄົວສະບັບໃໝ່ປະກອບໃສ່ໃບຄຳຮ້ອງຂໍປ່ຽນໜັງສືຜ່ານແດນ;
11. ບຸກຄົນທີ່ມາຂໍປ່ຽນໜັງສືຜ່ານແດນ ກໍລະນີ ອາໄສຢູ່ຕ່າງປະເທດ ຕ້ອງມີໃບນຳສົ່ງຂອງສະຖານທູດລາວ ປະຈາຢູ່ປະເທດທີ່ຕົນອາໄສຢູ່ ປະກອບໃສ່ຊຸດແບບຟອມຂໍປ່ຽນໜັງສືຜ່ານແດນ;
12. ບຸກຄົນທີ່ສະກົດຊື່ ແລະ ນາມສະກຸນ ພາສາຕ່າງປະເທດ ທີ່ຂັດກັບຫຼັກຂອງວິຊາການ (ສະກົດແບບພາສາຝຣັ່ງ ຕົວຢ່າງ: Mr. Seng ແຕ່ສະກົດ Mr. Saeng ຫຼື Mr. Phothisay ແຕ່ສະກົດ Mr. Bodhisay) ຕ້ອງສຳເນົາເອກະສານທີ່ທາງການເຄີຍອອກໃຫ້ ເຊັ່ນ: ໃບປະກາດ ຫລື ເອກະສານທາງການອື່ນໆ ມາຢັ້ງຢືນຕໍ່ເຈົ້າໜ້າທີ່ກ່ຽວຂ້ອງຂອງກົມກົງສຸນ;
13. ຄົນຕ່າງດ້າວທີ່ໄດ້ສັນຊາດລາວ ຕ້ອງສຳເນົາໃບມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການໃຫ້ສັນຊາດລາວພ້ອມດ້ວຍເອກະສານສະບັບແທ້ມາຢັ້ງຢືນ;
14. ສຳລັບພະສົງ, ສຳມະເນນ ແລະ ແມ່ຂາວ ຕ້ອງມີໃບຢັ້ງຢືນຈາກອົງການພຸດທະສາສະໜາຂອງແຂວງ ຫລື ກົມສາສະໜາຂອງສູນກາງແນວລາວສ້າງຊາດ, ສຳເນົາປຶ້ມສຸດທິ ແລະ ສຳມະໂນຄົວສົງປະກອບໃສ່ໃບຄຳຮ້ອງຂໍໜັງສືຜ່ານແດນ.